ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ 2764 /ປທສ.

ນະຄອນຫຼວງວຽງຈັນ, ວັນທີ 11 OCT 2018

# ຂໍ້ຕົກລົງ

## ວ່າດ້ວຍການແບ່ງຂັ້ນຄຸ້ມຄອງການດຳເນີນ ກິດຈະການ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ

- ອີງຕາມກົດໝາຍວ່າດ້ວຍ ການໂທລະຄົມມະນາຄົມ (ສະບັບປັບປຸງ) ສະບັບເລກທີ 09/ສພຊ, ລົງວັນທີ 21 ທັນວາ 2011.
- ອີງຕາມກົດໝາຍວ່າດ້ວຍ ເຕັກໂນໂລຊີການສື່ສານ ຂໍ້ມູນຂ່າວສານ ສະບັບເລກທີ 02/ສພຊ, ລົງວັນທີ 07 ພະຈິກ 2016.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1

## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ຂອບເຂດຄວາມຮັບຜິດຊອບ ໃນການຄຸ້ມຄອງການດຳເນີນກິດຈະການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເພື່ອຮັບປະກັນໃຫ້ການຄຸ້ມຄອງມີປະສິດທິພາບ, ວ່ອງໄວ ແລະ ໂປ່ງໃສ, ແນໃສ່ສົ່ງເສີມການດຳເນີນກິດຈະການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໃຫ້ມີຄວາມສະດວກ ແລະ ທົ່ວເຖິງ ປະກອບສ່ວນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

ມາດຕາ 2. ການແບ່ງຂັ້ນຄຸ້ມຄອງການດຳເນີນກິດຈະການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ

ການແບ່ງຂັ້ນຄຸ້ມຄອງການດຳເນີນກິດຈະການ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ແມ່ນການກຳນົດຄວາມຮັບຜິດຊອບໃນການຄຸ້ມຄອງ ແລະ ການອະນຸຍາດ ການດຳເນີນກິດຈະການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ລະຫວ່າງ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ.

ມາດຕາ 3. ການອະທິບາຍຄຳສັບ

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ** (Internet Data Center) ໝາຍເຖິງ ການໃຫ້ບໍລິການ ເຊົ່າພື້ນທີ່ຕິດຕັ້ງອຸປະກອນ, ເຊົ່າພື້ນທີ່ຕິດຕັ້ງເຄື່ອງເຊີເວີ, ເຊົ່າໃຊ້ເຊີເວີ, ເຊົ່າພື້ນທີ່ເຊີເວີ, ເຊົ່າໃຊ້ຊອບແວ, ເຊົ່າໃຊ້ຖານຂໍ້ມູນ ແລະ ອື່ນໆ;
2. **ບໍລິການ ຄຣາວ** (Cloud Service) ໝາຍເຖິງ ການສະໜອງບໍລິການທີ່ມີລັກສະນະນຳໃຊ້ຊັບພະຍາກອນຮ່ວມກັນ ໂດຍຜ່ານອິນເຕີເນັດ, ເປັນຕົ້ນ ໂປຣແກຣມນຳໃຊ້ ແລະ ຖານຂໍ້ມູນ;
3. **ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ** (Internet Content Center) ໝາຍເຖິງ ສູນໃຫ້ບໍລິການຂໍ້ມູນຂ່າວສານຕ່າງໆໃນຮູບແບບເອເລັກໂຕຣນິກ ເປັນຕົ້ນ ວີດີໂອ, ຮູບພາບ, ສຽງ, ເພງ, ໜັງສືຜ່ານອິນເຕີເນັດ;
4. **ການຜະລິດ, ປະກອບ ອຸປະກອນດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ** ໝາຍເຖິງ ໂຮງງານ ແລະ ບໍລິສັດຕ່າງໆ ທີ່ຜະລິດ, ປະກອບອຸປະກອນຄົບຊຸດ ຫຼື ສະເພາະບາງຊິ້ນສ່ວນ ທີ່ກ່ຽວຂ້ອງກັບເຕັກໂນໂລຊີສື່ສານ ແລະ ຂໍ້ມູນຂ່າວສານ ເປັນຕົ້ນ: ໂຮງງານຜະລິດຊິ້ນສ່ວນເອເລັກໂຕຣນິກ, ໂຮງງານປະກອບອຸປະກອນເອເລັກໂຕຣນິກ ແລະ ອື່ນໆ ທີ່ກ່ຽວຂ້ອງ;
5. **ການນຳເຂົ້າ ແລະ ຈຳໜ່າຍ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ** ໝາຍເຖິງ ການນຳເຂົ້າອຸປະກອນຮາດແວ ແລະ ຊອບແວ ຈາກຕ່າງປະເທດ, ຈຳໜ່າຍ ບັນດາຊອບແວ, ຮາດແວ ແລະ ອຸປະກອນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານອື່ນໆ;
6. **ອຸປະກອນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ** ໝາຍເຖິງ ບັນດາອຸປະກອນທີ່ກ່ຽວຂ້ອງກັບເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານເຊັ່ນ: ຄອມພິວເຕີ, ແລັບທ໋ອບ, ແທັບເລັດ, ສະມາດໂຟນ, ອຸປະກອນປະມວນຜົນ, ອຸປະກອນເກັບຂໍ້ມູນ, ອຸປະກອນເຄືອຂ່າຍ, ອຸປະກອນເຊື່ອມຕໍ່ອິນເຕີເນັດ ແລະ ອື່ນໆ;
7. **ການອອກໃບອະນຸຍາດນຳເຂົ້າອຸປະກອນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ** ໝາຍເຖິງ ການອອກໃບຢັ້ງຢືນ ໃນການນຳເຂົ້າອຸປະກອນ ເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ແຕ່ລະຄັ້ງເພື່ອອະນຸຍາດໃຫ້ນຳເຂົ້າອຸປະກອນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເພື່ອມານຳໃຊ້, ຈຳໜ່າຍ ຫຼື ສົ່ງຕໍ່ ພາຍໃນ ສປປ ລາວ.

8. **ການບໍລິການທີ່ປຶກສາ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ** ໝາຍເຖິງ ການໃຫ້ບໍລິການເປັນທີ່ປຶກສາ, ຜູ້ຊ່ວຍວິເຄາະ, ສະເໜີແຜນເພື່ອຕອບໂຈດຄວາມຕ້ອງການ ລວມທັງການຄົ້ນຄວ້າວິໄຈການຕະຫຼາດດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
9. **ການບໍລິການຝຶກອົບຮົມ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ** ໝາຍເຖິງ ການໃຫ້ບໍລິການສິດສອນໄລຍະສັ້ນ ແລະ ເປີດຝຶກອົບຮົມສະເພາະທາງດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
10. **ບໍລິການຄວາມປອດໄພ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ** ໝາຍເຖິງ ການບໍລິການສະໜອງບຸກຄະລາກອນ, ອຸປະກອນ ແລະ ໂປຣແກຣມຕ່າງໆ ເພື່ອຄວາມປອດໄພດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເປັນຕົ້ນ ການອອກແບບ-ປັບປຸງ-ພັດທະນາ ຜະລິດຕະພັນຮັກສາຄວາມປອດໄພ, ການບໍາລຸງຮັກສາ ແລະ ຮັບປະກັນຄວາມປອດໄພ, ການກວດສອບ ແລະ ປະເມີນຜົນລະບົບຄວາມປອດໄພ;
11. **ການສ້າງ ແລະ ບໍລິການ ຊອບແວ** ໝາຍເຖິງ ການສ້າງ, ປັບປຸງ, ດັດແປງ, ແກ້ໄຂ ແລະ ຕິດຕັ້ງ ໂປຣແກຣມຕ່າງໆ ທີ່ນໍາໃຊ້ໃນຄອມພິວເຕີ, ແທັບເລັດ ແລະ ມືຖື ເປັນຕົ້ນ ສ້າງໂປຣແກຣມບໍລິຫານຫ້ອງການຜ່ານອິນເຕີເນັດ, ໂປຣແກຣມຄຸ້ມຄອງການຂາຍຜ່ານອິນເຕີເນັດ, ໂປຣແກຣມນໍາໃຊ້ຜ່ານອິນເຕີເນັດ ແລະ ໂທລະສັບມືຖື;
12. **ການບໍລິການ ຕິດຕັ້ງ, ສ້ອມແປງ** ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ໝາຍເຖິງ ການບໍລິການຕິດຕັ້ງ, ສ້ອມແປງ, ບໍາລຸງຮັກສາ, ຮື້ຖອນ ແລະ ຍົກຍ້າຍ ອຸປະກອນດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ເປັນຕົ້ນ: ບໍລິສັດຮັບຕິດຕັ້ງລະບົບອິນເຕີເນັດ, ຮັບສ້ອມແປງເຄື່ອງໃຊ້ອິນເຕີເນັດ;
13. **ການໃຫ້ບໍລິການອິນເຕີເນັດ ກາເຟ** (Internet Cafe) ໝາຍເຖິງ ການດໍາເນີນກິດຈະການສະໜອງບໍລິການເຂົ້າເຖິງອິນເຕີເນັດ ແກ່ຜູ້ຊົມໃຊ້ທົ່ວໄປ ໃນຂອບເຂດຮ້ານ ຫຼື ສະຖານທີ່ໃດໜຶ່ງ ທີ່ມີລະບົບຄອມພິວເຕີ້ການເຊື່ອມຕໍ່ສັນຍານອິນເຕີເນັດຈາກຜູ້ໃຫ້ບໍລິການເຊື່ອມຕໍ່ອິນເຕີເນັດ;
14. **ການປະກອບການອື່ນ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ** ໝາຍເຖິງ ການບໍລິການໂອທີທີ (OTT), ອິນເຕີເນັດເຊື່ອມຕໍ່ທຸກອຸປະກອນ (IoT), ຄອນເຊັນເຕີ (Call Center) ແລະ ບໍລິການທີ່ເກີດຂຶ້ນໃໝ່.

**ມາດຕາ 4. ຂອບເຂດການນໍາໃຊ້**

ຂໍ້ຕົກລົງສະບັບນີ້ ນໍາໃຊ້ສໍາລັບ ກະຊວງໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແລະ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ ທົ່ວປະເທດ.

# ໝວດທີ 2

## ກິດຈະການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ

**ມາດຕາ 5. ກິດຈະການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ**

ກິດຈະການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ປະກອບມີ ດັ່ງນີ້:

1. ສູນກາງຂໍ້ມູນຂ່າວສານຜ່ານອິນເຕີເນັດ (Internet Data Center);
   ກ. ໃບອະນຸຍາດ ປະເພດ 1;
   ຂ. ໃບອະນຸຍາດ ປະເພດ 2;
   ຄ. ໃບອະນຸຍາດ ປະເພດ 3.
2. ບໍລິການ ຄຣາວ (Cloud Service);
3. ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ (Internet Content Center);
4. ການຜະລິດ, ປະກອບ ອຸປະກອນເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ;
   ກ. ຜະລິດອຸປະກອນ ແລະ ຊິ້ນສ່ວນ ເອເລັກໂຕຣນິກ;
   ຂ. ປະກອບ ອຸປະກອນເອເລັກໂຕຣນິກ.
5. ການນຳເຂົ້າ ແລະ ຈຳໜ່າຍ ອຸປະກອນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
6. ບໍລິການທີ່ປຶກສາ ດ້ານເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ;
7. ບໍລິການຝຶກອົບຮົມ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
8. ບໍລິການຄວາມປອດໄພ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
9. ການສ້າງ ແລະ ບໍລິການຊອບແວ;
10. ການບໍລິການຕິດຕັ້ງ, ສ້ອມແປງ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ;
11. ການໃຫ້ບໍລິການອິນເຕີເນັດ ກາເຟ (Internet Cafe);
    ກ. ການໃຫ້ບໍລິການອິນເຕີເນັດກາເຟ ປະເພດທີ 1;
    ຂ. ການໃຫ້ບໍລິການອິນເຕີເນັດກາເຟ ປະເພດທີ 2.
12. ການປະກອບການອື່ນ.
13.

# ໝວດທີ 3

## ການແບ່ງຂັ້ນຄຸ້ມຄອງ ການດຳເນີນກິດຈະການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ

### ມາດຕາ 6. ການແບ່ງຂັ້ນຄຸ້ມຄອງ

ການແບ່ງຄຸ້ມຄອງການດຳເນີນກິດຈະການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ລະຫວ່າງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ (ກະຊວງ ປທສ) ແລະ ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນຫຼວງ (ພະແນກ ປທສ) ແມ່ນປະຕິບັດດັ່ງຕາຕະລາງ ລຸ່ມນີ້:

| ລຳດັບ | ລາຍການ | ກະຊວງ ປທສ | ພະແນກ ປທສ |
|---|---|---|---|
| 01 | ສູນກາງຂໍ້ມູນ ຂ່າວສານຜ່ານອິນເຕີເນັດ (Internet Data Center) | | |
| | ກ. ໃບອະນຸຍາດ ປະເພດ 1 | + | |
| | ຂ. ໃບອະນຸຍາດ ປະເພດ 2 | + | |
| | ຄ. ໃບອະນຸຍາດ ປະເພດ 3 | + | |
| 02 | ບໍລິການຄຣາວ (Cloud Service) | + | |
| 03 | ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ (Internet Content Center) | + | |
| 04 | ຜະລິດ, ປະກອບ ອຸປະກອນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ | | |
| | ກ. ຜະລິດອຸປະກອນ ແລະ ຊິ້ນສ່ວນ ເອເລັກໂຕຣນິກ; | + | |
| | ຂ. ປະກອບ ອຸປະກອນເອເລັກໂຕຣນິກ. | + | |
| 05 | ບໍລິການນຳເຂົ້າ ແລະ ຈຳໜ່າຍອຸປະກອນ ເຕັກໂນໂລຊີການສື່ສານຂໍ້ມູນ ຂ່າວສານ | | |
| | ກ. ການອອກໃບອະນຸຍາດນຳເຂົ້າອຸປະກອນເຕັກໂນໂລຊີການສື່ສານຂໍ້ມູນ ຂ່າວສານ | + | |
| | ຂ. ບໍລິການ ຈຳໜ່າຍອຸປະກອນເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ | | + |
| 06 | ບໍລິການທີ່ປຶກສາ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ | | + |
| 07 | ບໍລິການຝຶກອົບຮົມ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ | | + |

| | | | |
|---|---|---|---|
| 08 | ບໍລິການຄວາມປອດໄພ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ | | + |
| 09 | ສ້າງ ແລະ ບໍລິການ ຊອບແວ | | + |
| 10 | ບໍລິການຕິດຕັ້ງ, ສ້ອມແປງ ດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ | | + |
| 11 | ບໍລິການອິນເຕີເນັດ ກາເຟ | | |
| | ກ. ບໍລິການອິນເຕີເນັດກາເຟ ປະເພດ 1 | | + |
| | ຂ. ບໍລິການອິນເຕີເນັດກາເຟ ປະເພດ 2 | | + |
| 12 | ການປະກອບການອື່ນໆ. | + | |

## ໝວດທີ 4

## ບົດບັນຍັດສຸດທ້າຍ

**ມາດຕາ 7. ການຈັດຕັ້ງປະຕິບັດ**

ມອບໃຫ້ກົມເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ແລະ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ/ນະຄອນຫຼວງ ຈັດຕັ້ງປະຕິບັດ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 8. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນໄດ້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ ວ່າດ້ວຍການແບ່ງຂັ້ນຄຸ້ມຄອງການປະກອບການດ້ານເຕັກໂນໂລຊີການສື່ສານຂໍ້ມູນຂ່າວສານ ສະບັບເລກທີ 330/ປທສ, ລົງວັນທີ 11 ກຸມພາ 2015 ແລະ ແຈ້ງການ ການຈັດຕັ້ງປະຕິບັດ ການແບ່ງຂັ້ນຄຸ້ມຄອງລະຫວ່າງສູນກາງ ແລະ ທ້ອງຖິ່ນ ສະບັບເລກທີ 1913/ຫກຊ, ລົງວັນທີ 24 ຕຸລາ 2017.

ລັດຖະມົນຕີ

ປອ. ທັນສະໄໝ ກົມມະສິດ